ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 278 /ລບ
ນະຄອນຫຼວງວຽງຈັນ, ວັນທີ 22-05-2024

# ດຳລັດ
# ວ່າດ້ວຍ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບເລກທີ 05/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິ ຂອງກອງປະຊຸມສະພາແຫ່ງຊາດວ່າດ້ວຍ ການຮອງຮັບວິໄສທັດ ການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030), ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025) ສະບັບເລກທີ 23/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 2333/ກຕສ, ລົງວັນທີ 07 ພຶດສະພາ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ເພື່ອລະດົມ ແລະ ສະສົມທຶນໃຫ້ມີທຶນພຽງພໍ ແນໃສ່ສະໜອງທຶນໃຫ້ແກ່ການພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນຢ່າງຍືນຍົງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດຫັນເປັນທັນສະໄໝຂອງ ສປປ ລາວ.

### ມາດຕາ 2 ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ

ກອງທຶນພັດທະນາໂທລະຄົມ ແລະ ການຫັນເປັນດີຈີຕອນ ຂຽນຫຍໍ້ວ່າ "ກທດ" ເປັນພາສາອັງກິດວ່າ Digital Transformation and Telecommunications Development Fund "DTTDF" ແມ່ນກອງທຶນ ຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອສະສົມ ແລະ ລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນການຫັນເປັນດີຈີຕອນ, ການຂະຫຍາຍ ແລະ ພັດທະນາໂຄ່ງລ່າງພື້ນຖານໂທລະຄົມມະນາຄົມ ໄປເຖິງຊົນນະບົດ

ເຂດຫ່າງໄກສອກຫຼີກ, ການພັດທະນາຊັບພະຍາກອນມະນຸດ, ລະບົບຖານດິຈິຕອນ, ຄວາມປອດໄພຂອງການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການພັດທະນາໂທລະຄົມມະນາຄົມ** ໝາຍເຖິງ ການສ້າງນະໂຍບາຍ, ການພັດທະນາບຸກຄະລາກອນ ແລະ ການຂະຫຍາຍໂຄງລ່າງພື້ນຖານ ດ້ານໂທລະຄົມມະນາຄົມ ໃຫ້ຮັບປະກັນຄຸນນະພາບການບໍລິການ ໃນເຂດຕົວເມືອງ ໃຫ້ໄປເຖິງເຂດຫ່າງໄກສອກຫຼີກ ແລະ ຮັບປະກັນຄວາມໝັ້ນຄົງ ຂອງຊາດ;

2. **ການຫັນເປັນດິຈິຕອນ** ໝາຍເຖິງ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອຫັນປ່ຽນການເຄື່ອນໄຫວ, ການຜະລິດ, ການບໍລິຫານ ແລະ ການບໍລິການ ຂອງລັດ ແລະ ການພັດທະນາເສດຖະກິດ-ສັງຄົມ;

3. **ເຕັກໂນໂລຊີດິຈິຕອນ** ໝາຍເຖິງ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ໄດ້ພັດທະນາໃຫ້ເປັນລະບົບທັນສະໄໝ ເພື່ອຮອງຮັບການຫັນເປັນດິຈິຕອນ ເປັນຕົ້ນ ລະບົບຄຣາວ, ລະບົບພລັດຟອມ, ປັນຍາປະດິດ, ຖານຂໍ້ມູນມະຫາສານ, ກຸ່ມຂໍ້ມູນຜູກພັນ;

4. **ລັດຖະບານດິຈິຕອນ** ໝາຍເຖິງ ການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການບໍລິຫານ ແລະ ການບໍລິການ ໃນທຸກຂະແໜງການ ຂອງລັດ;

5. **ເສດຖະກິດດິຈິຕອນ** ໝາຍເຖິງ ເສດຖະກິດຮູບແບບໃໝ່ ທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເປັນເຄື່ອງມືໃນການຂັບເຄື່ອນ, ເພີ່ມປະສິດທິພາບ ແລະ ປະສິດທິຜົນ ຂອງວຽກງານເສດຖະກິດ ຂອງພາກລັດ ແລະ ເອກະຊົນ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ, ການຄ້າ ແລະ ການບໍລິການ;

6. **ສັງຄົມດິຈິຕອນ** ໝາຍເຖິງ ສັງຄົມ ທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເປັນເຄື່ອງມືໃນການຂັບເຄື່ອນ, ການເຊື່ອມໂຍງ, ການບໍລິການ ແລະ ການດຳເນີນຊີວິດຂອງສັງຄົມ ໃຫ້ມີຄວາມສະດວກ, ວ່ອງໄວ, ປະຢັດ ແລະ ມີຄຸນນະພາບ ທີ່ດີຂຶ້ນ;

7. **ໂຄງລ່າງພື້ນຖານດິຈິຕອນ** ໝາຍເຖິງ ໂຄງລ່າງພື້ນຖານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຮອງຮັບການສ້າງລະບົບດິຈິຕອນ ເພື່ອນຳໃຊ້ທາງດ້ານ ການຄ້າ, ການລົງທຶນ, ການບໍລິຫານ, ການບໍລິການ ແລະ ການພົວພັນ ໃນສັງຄົມ;

8. **ລະບົບຖານດິຈິຕອນ (Digital Platform)** ໝາຍເຖິງ ລະບົບພື້ນຖານໃດໜຶ່ງ ທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອສ້າງສະພາບແວດລ້ອມ ໃນການເຊື່ອມໂຍງກັບ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ສາມາດນຳໃຊ້ບໍລິການ ຫຼື ເຮັດທຸລະກຳໃດໜຶ່ງ ຮ່ວມກັນແບບທັນສະໄໝ ເປັນຕົ້ນ ພລັດຟອມໃຫ້ບໍລິການລັດຜ່ານອິນເຕີເນັດ, ພລັດຟອມເກັບຂໍ້ມູນພາກລັດ, ພລັດຟອມສະແດງຜົນ;

9. **ຜະລິດຕະພັນການບໍລິການ** ໝາຍເຖິງ ຜົນຜະລິດທີ່ສ້າງຂຶ້ນໂດຍ ກະຊວງເຕັກໂນໂລຊີ ແລະ ການສື່ສານ ດ້ວຍການນຳໃຊ້ ເຕັກໂນໂລຊີດິຈິຕອນ ເພື່ອໃຫ້ບໍລິການແກ່ ພາກລັດ, ພາກເອກະຊົນ ແລະ ສັງຄົມທົ່ວໄປ ເປັນຕົ້ນ ລະບົບບໍລິຫານເອກະສານເອເລັກໂຕຣນິກ, ລະບົບກອງປະຊຸມທາງໄກ, ການສົນທະນາອອນລາຍ ແລະ ອື່ນໆ;

10. **ຫົວໜ່ວຍທຸລະກິດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ** ໝາຍເຖິງ ຜູ້ທີ່ດຳເນີນທຸລະກິດ ທີ່ໃຫ້ບໍລິການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ແລະ 27 ຂອງກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບເລກທີ 32/ສພຊ ວັນທີ 16 ພະຈິກ 2021;

**11.** ຫົວໜ່ວຍທຸລະກິດໄປສະນີ ໝາຍເຖິງ ຜູ້ທີ່ດຳເນີນທຸລະກິດ ທີ່ໃຫ້ບໍລິການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍ ການໄປສະນີ ສະບັບເລກທີ 45/ສພຊ ວັນທີ 25 ທັນວາ 2013;

**12.** ຫົວໜ່ວຍທຸລະກິດດິຈິຕອນ ໝາຍເຖິງ ຜູ້ທີ່ດຳເນີນທຸລະກິດ ຕາມທີ່ກຳນົດໄວ້ໃນມາດຕາ 38 ແລະ ມາດຕາ 39 ຂອງກົດໝາຍວ່າດ້ວຍ ເຕັກໂນໂລຊີສື່ສານ ຂໍ້ມູນ ຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 7 ພະຈິກ 2016 ແລະ ໃນມາດຕາ 46 ຂອງກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022;

**13.** ຄ່າຮັກສາຄວາມປອດໄພ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໝາຍເຖິງ ຄ່າບໍລິການ ທີ່ເກີດຈາກການຄຸ້ມຄອງຄວາມປອດໄພ ຂອງລະບົບການບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ຊຶ່ງກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ໃນຂອບເຂດທົ່ວປະເທດ.

### ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ກອງທຶນ

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາ ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
3. ຮັບປະກັນການເຄື່ອນໄຫວ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;
4. ຮັບປະກັນຄວາມ ຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ຮັບປະກັນການ ຕິດຕາມ ກວດກາ ແລະ ປະເມີນຜົນ ຢ່າງເປັນປົກກະຕິ.

## ໝວດທີ 2
## ແຫຼ່ງກອງທຶນ ແລະ ເປົ້າໝາຍນຳໃຊ້

### ມາດຕາ 5 ແຫຼ່ງກອງທຶນ

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ການປະກອບສ່ວນຂອງງົບປະມານແຫ່ງລັດ;
2. ໜຶ່ງສ່ວນຮ້ອຍ (1%) ຂອງລາຍຮັບທຸລະກິດ (ທີ່ບໍ່ລວມອາກອນທາງອ້ອມ ຄື: ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ) ຈາກຫົວໜ່ວຍທຸລະກິດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ, ຫົວໜ່ວຍທຸລະກິດໄປສະນີ ແລະ ຫົວໜ່ວຍທຸລະກິດດິຈິຕອນ;
3. ຫ້າສ່ວນຮ້ອຍ (5%) ຂອງລາຍຮັບ ຈາກການໃຫ້ບໍລິການຜະລິດຕະພັນການບໍລິການ;
4. ລາຍຮັບຈາກການບໍລິຫານກອງທຶນ;
5. ສາມສິບສ່ວນຮ້ອຍ (30%) ຈາກຄ່າປັບໃໝຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ;
6. ລາຍຮັບຈາກຄ່າຮັກສາຄວາມປອດໄພໂທລະຄົມມະນາຄົມ ແລະ ອິນເຕີເນັດ;
7. ການຊ່ວຍເຫຼືອ ແລະ ປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
8. ແຫຼ່ງລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 6  ເປົ້າໝາຍການນຳໃຊ້ກອງທຶນ**

ເປົ້າໝາຍການນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ມີ ດັ່ງນີ້:

1. ສ້າງ, ພັດທະນາ ແລະ ບຳລຸງຮັກສາ ໂຄງລ່າງພື້ນຖານໂທລະຄົມມະນາຄົມ ທີ່ຈຳເປັນ ເພື່ອໃຫ້ໄປເຖິງ ເຂດຫ່າງໄກສອກຫຼີກ, ເຂດຍຸດທະສາດ, ຮັບປະກັນຄວາມໝັ້ນຄົງ ຂອງຊາດ ແລະ ເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ;

2. ສ້າງ, ພັດທະນາ ແລະ ບຳລຸງຮັກສາ ລະບົບຄຸ້ມຄອງເຕັກໂນໂລຊີ ແລະ ການສື່ສານ, ແອບພລິເຄເຊິນ, ໂຄງລ່າງພື້ນຖານດີຈີຕອນ ແລະ ລະບົບຖານດີຈີຕອນ ໃຫ້ມີຄວາມປອດໄພ, ມີຄຸນນະພາບ, ຮັບປະກັນຄວາມໝັ້ນຄົງຂອງຊາດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

3. ນຳໃຊ້ເຂົ້າໃນການ ສ້າງ, ພັດທະນາ, ບຳລຸງຮັກສາ ແລະ ຄຸ້ມຄອງລະບົບໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມການຕົກລົງເຫັນດີ ຂອງລັດຖະບານ;

4. ຄົ້ນຄ້ວາ ສ້າງ ແລະ ປັບປຸງນິຕິກຳ, ສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ທີ່ຈຳເປັນເຂົ້າໃນການພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ເພື່ອຮອງຮັບໃນການສ້າງລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ;

5. ພັດທະນາບຸກຄະລາກອນ ທາງດ້ານໂທລະຄົມມະນາຄົມ ແລະ ດີຈີຕອນ ໃຫ້ໄດ້ຄຸນນະພາບສູງ;

6. ສະໜັບສະໜູນກິດຈະກຳການເຄື່ອນໄຫວວຽກງານໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ເປັນຕົ້ນ ປະຊຸມ, ສຳມະນາ, ຝຶກອົບຮົມ, ເຄື່ອນໄຫວວຽກທາງລັດຖະການ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ;

7. ນຳໃຊ້ເຂົ້າໃນການດັດສົມອັດຕາລາຄາການບໍລິການ ໂທລະຄົມມະນາຄົມ ແລະ ດີຈີຕອນ ເປັນຕົ້ນ ການບໍລິການທາງດ້ານ ການສຶກສາ, ສາທາລະນະສຸກ, ສາທາລະນະປະໂຫຍດ, ເວລາເກີດໄພພິບັດ;

8. ການຕິດຕາມ ກວດກາ, ການປະເມີນຜົນໂຄງການ, ການບໍລິຫານ ແລະ ການເຄື່ອນໄຫວວຽກງານ ກອງທຶນ;

9. ເປົ້າໝາຍອື່ນທີ່ກ່ຽວຂ້ອງ ຕາມການຕົກລົງ ຂອງສະພາບໍລິຫານກອງທຶນ.

**ມາດຕາ 7  ການຄຸ້ມຄອງເບີກຈ່າຍເງິນກອງທຶນ**

ການຄຸ້ມຄອງການເບີກຈ່າຍເງິນກອງທຶນ ຕ້ອງປະຕິບັດ ດັ່ງນີ້:

1. ການເບີກຈ່າຍ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ຕ້ອງນອນໃນແຜນງົບປະມານປະຈຳປີ ແລະ ຜ່ານການຮັບຮອງຈາກສະພາບໍລິຫານ ກທດ;

2. ທຸກການໃຊ້ຈ່າຍເງິນກອງທຶນ ຕ້ອງໄດ້ຮັບການອະນຸມັດ ຈາກປະທານສະພາບໍລິຫານ ຫຼື ຜູ້ຖືກມອບສິດ;

3. ການເບີກຈ່າຍເງິນກອງທຶນ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ທຸກເປົ້າໝາຍໃນການເບີກຈ່າຍເງິນກອງທຶນ ບໍ່ໃຫ້ຊ້ຳຊ້ອນກັບແຫຼ່ງທຶນອື່ນ;

5. ການຈັດຕັ້ງປະຕິບັດເງິນກອງທຶນ ຕ້ອງບົນພື້ນຖານຄວາມຮັບຜິດຊອບ ແລະ ມີປະສິດທິຜົນ.

**ມາດຕາ 8  ການຖອນເງິນກອງທຶນ**

ການຖອນເງິນຈາກບັນຊີເງິນຝາກ ຕ້ອງປະຕິບັດຕາມແຜນການ, ແຜນງານ, ໂຄງການ ທີ່ຖືກຮັບຮອງໂດຍສະພາບໍລິຫານກອງທຶນ ແລະ ຖືກຕ້ອງ ຕາມລະບຽບການຄຸ້ມຄອງກອງທຶນ ແລະ ລະບຽບການຂອງກະຊວງການເງິນ.

ການຖອນເງິນຈາກບັນຊີ ກທດ ຕ້ອງມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບມອບສິດ ຈາກສະພາບໍລິຫານ ກທດ. ການຖອນເງິນຈາກບັນຊີເງິນຝາກ ບໍ່ໃຫ້ເກີນລາຍຮັບທັງໝົດ ຂອງກອງທຶນໃນແຕ່ລະປີ. ການຖອນເງິນກອງທຶນ ບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງມີເງິນແຮໄວ້ ຊາວສ່ວນຮ້ອຍ ຂອງກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 9 ໂຄງປະກອບການຈັດຕັ້ງຂອງກອງທຶນ**

ໂຄງປະກອບການຈັດຕັ້ງ ກທດ ມີດັ່ງນີ້:

1. ສະພາບໍລິຫານ ກທດ;
2. ກອງເລຂາ ກທດ.

**ມາດຕາ 10 ສະພາບໍລິຫານກອງທຶນ**

ສະພາບໍລິຫານ ກທດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສະພາບໍລິຫານ ກທດ ມີວາລະການຄຸ້ມຄອງບໍລິຫານກອງທຶນ ຫ້າ ປີ.

**ມາດຕາ 11 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານ ກທດ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງ;
3. ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຮອງ, ທັງເປັນຜູ້ປະຈຳການ;
4. ຫົວໜ້າ ອົງການດັດສົມໂທລະຄົມມະນາຄົມ ເປັນຄະນະ;
5. ຫົວໜ້າ ສູນອິນເຕີເນັດ ແຫ່ງຊາດ ເປັນຄະນະ;
6. ຫົວໜ້າ ກົມເຕັກໂນໂລຊີ ດີຈີຕອນ ເປັນຄະນະ;
7. ຫົວໜ້າ ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ ເປັນຄະນະ;
8. ຫົວໜ້າ ສູນບໍລິຫານລັດດີຈີຕອນ ເປັນຄະນະ;
9. ຫົວໜ້າ ສຳນັກງານສົ່ງເສີມວິສາຫະກິດ, ວິສະຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
10. ຫົວໜ້າ ກົມການສຶກສາຊັ້ນສູງ, ກະຊວງ ສຶກສາທິການ ແລະ ກິລາ ເປັນຄະນະ;
11. ປະທານສະມາຄົມໄອຊີທີ ແລະ ດີຈີຕອນ ລາວ ເປັນຄະນະ;
12. ຫົວໜ້າກອງເລຂາ ກທດ ເປັນຄະນະ.

ໂຄງປະກອບ ຂອງສະພາບໍລິຫານ ກທດ ສາມາດປັບປຸງ ຫຼື ປ່ຽນແປງ ຕາມຄວາມຈຳເປັນ ໂດຍການຕົກລົງ ຂອງນາຍົກລັດຖະມົນຕີ.

ໃນກໍລະນີ ທີ່ສະມາຊິກສະພາບໍລິຫານກອງທຶນ ທ່ານໃດໜຶ່ງ ຫາກຍົກຍ້າຍໄປປະຕິບັດໜ້າທີ່ອື່ນ ຫຼື ບໍ່ສາມາດປະຕິບັດໜ້າທີ່ ຂອງຕົນ ໄດ້ນັ້ນ ໃຫ້ແຕ່ງຕັ້ງຜູ້ໃໝ່ແທນ.

ສະມາຊິກສະພາບໍລິຫານ ກທດ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍປະຊຸມ ຕາມລະບຽບການຄຸ້ມຄອງກອງທຶນ.

ມາດຕາ 12 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ

ສະພາບໍລິຫານກອງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ພິຈາລະນາ ຮັບຮອງ ແຜນການ, ແຜນງານ, ໂຄງການ ແລະ ງົບປະມານ ການເຄື່ອນໄຫວ ກ່ຽວກັບການພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ;

3. ອອກ ລະບຽບການ, ຄຳແນະນຳ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ;

4. ຮຽກ ປະຊຸມສະໄໝສາມັນ ແລະ ວິສາມັນ ຂອງສະພາບໍລິຫານກອງທຶນ;

5. ແຕ່ງຕັ້ງກອງເລຂາກອງທຶນ ແລະ ພະນັກງານຊ່ວຍວຽກ;

6. ຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານ ຂອງກອງເລຂາກອງທຶນ;

7. ແຕ່ງຕັ້ງຄະນະວິຊາການດ້ານຕ່າງໆ ເພື່ອປະຕິບັດໜ້າທີ່ໃນວຽກງານ ຂອງກອງທຶນ;

8. ລະດົມແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ກອງທຶນເຕີບໃຫຍ່ຂະຫຍາຍຕົວ;

9. ຕິດຕາມ ກວດກາ, ກວດສອບ ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃນການບໍລິຫານຈັດການ ໃຫ້ຖືກຕ້ອງກັບແຜນການ ແລະ ສອດຄ່ອງກັບເປົ້າໝາຍນຳໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກອງທຶນ ໃຫ້ລັດຖະບານ ຢ່າງໜ້ອຍປີລະ ສອງຄັ້ງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 13 ກອງປະຊຸມສະພາບໍລິຫານກອງທຶນ

ກອງປະຊຸມສະໄໝສາມັນ ຂອງສະພາບໍລິຫານກອງທຶນ ຈັດຂຶ້ນປີລະສອງຄັ້ງ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດຈັດກອງປະຊຸມສະໄໝວິສາມັນຂຶ້ນ ໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີ ຂອງສະມາຊິກສະພາບໍລິຫານ.

ກອງປະຊຸມ ຈະເປີດໄດ້ກໍຕໍ່ເມື່ອ ສະມາຊິກຂອງສະພາບໍລິຫານ ເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

ໃນກໍລະນີ ປະທານສະພາບໍລິຫານກອງທຶນ ບໍ່ຢູ່ ຫຼື ຕິດຂັດ ໃຫ້ຮອງປະທານ ເປັນຜູ້ປະຕິບັດໜ້າທີ່ແທນ.

ມາດຕາ 14 ກອງເລຂາກອງທຶນ

ກອງເລຂາ ກທດ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍສະພາບໍລິຫານກອງທຶນ.

ຫົວໜ້າ ແລະ ຮອງຫົວໜ້າ ກອງເລຂາມີຕຳແໜ່ງບໍລິຫານ ດັ່ງນີ້:

1. ຫົວໜ້າກອງເລຂາກອງທຶນທຽບເທົ່າ ຕຳແໜ່ງບໍລິຫານ ປະເພດ 2;

2. ຮອງຫົວໜ້າກອງເລຂາກອງທຶນທຽບເທົ່າຕຳແໜ່ງບໍລິຫານ ປະເພດ 3.

ມາດຕາ 15 ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນ

ກອງເລຂາກອງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ສະພາບໍລິຫານກອງທຶນ ໃນການຄຸ້ມຄອງບໍລິຫານ ແລະ ການເຄື່ອນໄຫວວຽກງານ ຂອງກອງທຶນ;

2. ຄົ້ນຄວ້າສ້າງ, ສັງລວມ ແລະ ນຳສະເໜີ ແຜນການເຄື່ອນໄຫວນຳໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງ;

3. ຄົ້ນຄວ້າສ້າງ ລະບຽບການ, ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ ;

4. ສຶກສາ, ຄົ້ນຄ້ວາ ວິທີການ ແລະ ຮູບແບບ ໃນການລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ;

5. ໂຄສະນາເຜີຍແຜ່ ກ່ຽວກັບຄວາມໝາຍ, ຄວາມສໍາຄັນ ແລະ ພາລະບົດບາດ ຂອງກອງທຶນ;

6. ບັນທຶກ, ຈົດຮັບ-ຈົດຈ່າຍ ເງິນກອງທຶນ, ຄຸ້ມຄອງຊັບສິນ, ເງິນສົດ ທີ່ໄດ້ຈາກການປະກອບສ່ວນ ແລະ ແຫຼ່ງລາຍຮັບຕ່າງໆ ພ້ອມທັງຄຸ້ມຄອງບັນຊີເງິນຝາກ ຂອງກອງທຶນ;

7. ເບີກຈ່າຍເງິນສົດ ແລະ ວັດຖຸ, ອຸປະກອນ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວວຽກງານ ຫຼື ກິດຈະກໍາຕ່າງໆ ຕາມແຜນທີ່ຖືກຮັບຮອງ;

8. ຕິດຕາມ ກວດກາ ແລະ ປະເມີນຜົນ ການນໍາໃຊ້ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

9. ປະສານສົມທົບກັບ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂອງລັດ ໃນການຈັດຕັ້ງປະ ຕິບັດວຽກງານ ຂອງກອງທຶນ;

10. ພົວພັນ ຮ່ວມມື ກັບ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂອງກອງທຶນ ໃນແຕ່ລະໄລຍະ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງສະພາບໍລິຫານກອງທຶນ.

## ໝວດທີ 4
## ການເປີດບັນຊີ, ການກວດສອບ, ການກວດກາ ແລະ ການລາຍງານ

**ມາດຕາ 16 ການເປີດບັນຊີ**

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ຕ້ອງມີລະບົບບັນຊີ ທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ການບັນຊີ ແລະ ຕ້ອງເປີດບັນຊີເງິນຝາກ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ຕາມການເຫັນດີ ຂອງກະຊວງການເງິນ.

**ມາດຕາ 17 ການກວດສອບບັນຊີ**

ການກວດສອບບັນຊີ ຂອງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ຕ້ອງດໍາເນີນທຸກໆປີ ໂດຍການກວດສອບພາຍໃນ ແລະ ອົງການກວດກສອບແຫ່ງລັດ. ສໍາລັບຜົນຂອງການກວດສອບຕ້ອງໄດ້ແຈ້ງໃຫ້ສາທາລະນາຊົນຮັບຊາບ ເພື່ອຄວາມໂປ່ງໃສ ໃນການນໍາໃຊ້ເງິນກອງທຶນ.

**ມາດຕາ 18 ການກວດກາກອງທຶນ**

ການກວດກາ ກທດ ແມ່ນການກວດກາການເຄື່ອນໄຫວ ແລະ ການຄຸ້ມຄອງບໍລິຫານຂອງ ກທດ ຊຶ່ງປະກອບດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ແມ່ນການກວດກາ ທີ່ດໍາເນີນໄປ ຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາ ທີ່ແນ່ນອນ;

2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນໂດຍແຈ້ງ ໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ມາດຕາ 19 ການລາຍງານ**

ກອງເລຂາ ກທດ ຕ້ອງສ້າງບົດລາຍງານການເຄື່ອນໄຫວປະຈຳ ໄຕມາດ, ຫົກເດືອນ ແລະ ປະຈຳປີ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ກອງທຶນ ລວມທັງແຫຼ່ງ ລາຍຮັບ-ລາຍຈ່າຍ ປະຈຳປີ. ບົດລາຍງານທຸກສະບັບ ຕ້ອງໄດ້ຮັບຮອງຈາກສະພາບໍລິຫານກອງທຶນ ກ່ອນນຳສົ່ງລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 20 ຕາປະທັບ**

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ມີຕາປະທັບເປັນ ຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ພ້ອມທັງລາຍງານການເຄື່ອນໄຫວວຽກງານ ຂອງກອງທຶນ ໃຫ້ລັດຖະບານ ໜຶ່ງຄັ້ງຕໍ່ປີ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 30 ພຶດສະພາ 2024.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**